ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

PCD

ເລກທີ 160 /ພກພ
ນະຄອນຫຼວງວຽງຈັນ, ວັນທີ 12 MAR 2025

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ);
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ;
ທ່ານ ຜູ້ຖືຮຸ້ນ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.

ເລື່ອງ: ແຈ້ງມະຕິກອງປະຊຸມສະພາບໍລິຫານ ສະໄໝວິສາມັນ ຄັ້ງທີ II ປີ 2025.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງ ສຄຄຊ ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດແຈ້ງມະຕິກອງປະຊຸມສະພາບໍລິຫານ ສະໄໝວິສາມັນ ຄັ້ງທີ II ປີ 2025 ເຊິ່ງໄດ້ຈັດຂຶ້ນໃນວັນທີ 11 ມີນາ 2024 ເວລາ 15:30 ໂມງ ທີ່ຫ້ອງປະຊຸມຊັ້ນ 3 ໂຮງແຮມ ຄອນຕິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ, ພາຍໃຕ້ການເປັນປະທານຂອງ ທ່ານ ປອ ສີທອງ ພົມມະຈິດ ພ້ອມດ້ວຍສະມາຊິກສະພາບໍລິຫານ ດັ່ງນີ້:

1. ທ່ານ ປອ ສີທອງ ພົມມະຈິດ	:	ປະທານສະພາບໍລິຫານ
2. ທ່ານ ສິທາ ພົມມະຈິດ	:	ຮອງປະທານສະພາບໍລິຫານ
3. ທ່ານ ແພງ ດວງເງິນ	:	ສະມາຊິກສະພາບໍລິຫານ / ຜູ້ອຳນວຍການໃຫຍ່
4. ທ່ານ ນັນທະລັດ ທິລະກຸນ	:	ສະມາຊິກສະພາບໍລິຫານ / ສະມາຊິກອິດສະລະ
5. ທ່ານ ນາງ ໄຮທອງ ພົມມະຈິດ	:	ສະມາຊິກສະພາບໍລິຫານ / ຮອງຜູ້ອຳນວຍການໃຫຍ່ ຝ່າຍບັນຊີການເງິນ
6. ທ່ານ ພຸມສະຫວັນ ສຸນັນທອງ	:	ສະມາຊິກສະພາບໍລິຫານ / ຮອງຜູ້ອຳນວຍການໃຫຍ່ ຝ່າຍພັດທະນາທຸລະກິດ
7. ທ່ານ ພຸດທະເສນ ພົມມີໄຊ	:	ສະມາຊິກສະພາບໍລິຫານ / ສະມາຊິກອິດສະລະ

ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີເປັນເອກະພາບກັນ ດັ່ງນີ້:

1) ພິຈາລະນາ ຮັບຮອງ ແຜນການປ່ຽນແປງມູນຄ່າກຳນົດຂອງຮຸ້ນ ພກພ ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ພິຈາລະນາ ແລະ ຮັບຮອງ;
2) ພິຈາລະນາ ຮັບຮອງ ການປັບປຸງກິດລະບຽບບໍລິສັດ ແລະ ການຂຶ້ນທະບຽນວິສາຫະກິດໃໝ່ຂອງ ພກພ ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ພິຈາລະນາ ແລະ ຮັບຮອງ;
3) ຮັບຮອງ ການເພີ່ມກຳນົດວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024, ມີລາຍລະອຽດດັ່ງນີ້:

ວາລະທີ 6: ພິຈາລະນາ ແລະ ຮັບຮອງການປ່ຽນແປງມູນຄ່າກຳນົດຂອງຮຸ້ນ ພກພ;

ວາລະທີ 7: ພິຈາລະນາ ແລະ ຮັບຮອງການການປັບປຸງກິດລະບຽບບໍລິສັດ ແລະ ການຂຶ້ນທະບຽນວິສາຫະກິດໃໝ່ຂອງ ພກພ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ປະທານສະພາບໍລິຫານ

ປອ ສີທອງ ພົມມະຈິດ